# ສົ່ງອີເມລ໌ຖາມຂ່າວ

ໂດຍ: ບ່າວຫຼັກເຈັດ

ວັນນີ້ຟ້າມືດຄຶ້ມ          ນັ່ງຊຶມຮ່ຳຮອນຄິດ
ມິດເພື່ອນຄຣູທັງຫຼາຍ          ຢູ່ຈັ່ງໃດນໍເຈົ້າ
ມີຂ່າວຄາວໃຫ້ໄຂຂໍ້          ພໍໄດ້ຟັງໃຫ້ຮູ້ທົ່ວ
ແມ່ນຈະດີຫຼືຊົ່ວ  ໃຫ້ພົວພັນຫມັ່ນກ້ຽວ          ກົມກຽວໄວ້ຢ່າຫ່າງເຫີນ

ບັດນີ້  ຂ້ອຍຂໍຂານກູກເອີ້ນ          ຖາມຂ່າວທາງອີເມລ໌
ແຖວ **Paris** ເມືອງງາມ          **Tour Eiffel**  ແຖວນັ້ນ
ເອື້ອຍສົມພານຄືຫາຍຈ້ອຍ          ປະໃຫ້ຄອຍດາຍເປົ່າ
ຫນໍໂພໄຊບໍ່ສົ່ງຂ່າວ          ມີອີ່ຫຼັງບອກໃຫ້ຮູ້          ການງານສູ້ດູ່ສູ່ແນວ

ສຳລັບເອື້ອຍທ່ອນແກ້ວ          ຊ່າງງຽບມິດປານປິດໄງ
ເອື້ອຍສຸໃດ ກໍຄືກັນ          ອ່າວກະສັນເຫງົາງ້ວງ
ສ່ວນວ່ານາງບຸນກວ້າງ          ໃຫ້ຫວງ ໂທຫາຫມູ່  ແນ່ເດີ
ປະໃຫ້ມິດເພື່ອນຄຣູ  ລໍຢູ່ຈໍຄອມພິວເຕີ້ຣ໌ ໃຫ້ຄອຍເກີ້ ອ່ານອີເມລ໌

ຍັງຄິດເຫັນຢູ່ບໍ່ແລ້ວ          ຜູ້ມາດ່ອນແດນໄກ
ເອື້ອຍຈັນທອນແສນອາຍ          ເປັນຈັ່ງໃດເມືອເຖິງບ້ານ
ອ້າຍບຸນທຽວຜູ້ຫານຫ້າວ          ຄິດເຖິງຄາວເຮົາໄດ້ຮ່ວມ  ກັນເດີ
ງານສັງສັນພາກັນຮວມ  ນຸ່ງເສື້ອຂາວຢູ່ເດີ່ນບ້ານ ຂັນເງິນນັ້ນໃຫ້ຄິດເຫັນ

ບັດນີ້ ຂໍກ່າວເນັ້ນ          ທັງເຂດຖິ່ນ ການາດາ
ຄືອາຈານວັນພິລາ          ສງ່າອົງຊົງບູ້
ກັບເອື້ອຍຄຣູແນວຫນ້າ          ເອື້ອຍ ໂສດາລາວມັກມ່ວນ
ເວົ້າຊວນຫົວໃຫ້ແຂ້ວແຫ້ງ          ຈົນເຈັບທ້ອງຍ້ອນ ລິບ ໂພ

ທ່ານຄຳກົງຜູ້ຮູບ ໂກ້          ເກາະ ໂສ້ຕ່ອງກັບພັລຍາ
ເອື້ອຍແກ້ວຕາຄືຫົວໃຈ          ເປັນຈັ່ງໃດຢູ່ທາງພີ້
ມີຂ່າວຄາວຢ່າລໍຊ້າ          ຈົດຫມາຍມາອີເມລ໌ສົ່ງ
ຄຳຕົກລົງກ່ຽວຂ້ອງ          ຊຸມນ້ອງນັ້ນຈື່ຈຳ  ຢູ່ໃດ໋

ຖາມຂ່າວທາງຝ່າຍກໍ້າ     ບ່ອນໜາວເຮັ່ງແດນໄກ
ທ່ານສີໄຮ ນາງບຸນຊຽນ     ໃຫ້ໝັ່ນຂຽນສົ່ງພໍຮູ້
ຢ່າຢູ່ດຽວດາຍເສົ້າ     ຊິເຫງົາໃຈເປັນລາຍຕ່າງ
ທາວທວງຫາກັນຢູ່ເລື້ອຍ     ຄືເຄືອເຟື້ອຍໃຫ້ໄຕ່ສານ

ຝ່າຍຜູ້ນຳທີ່ເຊື່ອໝັ້ນ     ທ່ານເງິນແຫ່ງເກຕຕະວົງ
ສົ່ງອີເມລ໌ມາຢາມ     ຖາມຂ່າວຄາວຢູ່ເລີງເລື້ອຍ
ສ່ວນເອື້ອຍຍິມມະລາໃຫ້     ຄວາມຈິງໃຈເປັນຕົວຢ່າງ
ຊຸມຮຸ່ນນ້ອງລຸນຫຼັງ     ຍັງຄຶດເຖິງພວກເຈົ້າ     ພາກັນເວົ້າຈົ່ມຫາ

ອີກຄົນໜຶ່ງມີກີຕ້າຣ໌     ບຸນສວ່າ ວັນທອງ
ສອງກັບນາງໄພທູນ     ເປັນຄູ່ບຸນຄຽງສ້າງ
ແປງຫຼືຍັງອີເມລ໌ເຈົ້າ     ຂຽນຫາເຮົາໃຫ້ຮູ້ແນ່
ຈະເປັນກາຍບໍ່ແວ່     ຫຼືເປັນແຮບໍ່ລ້າງ     ຜັດກ້ຽງກວ່າງສີ

ຖາມເພື່ອນຝູງແຕ່ກ່ອນກີ້     ຜູ້ມີຫ່ວງສົມບັດ
ຜັດແຕ່ມີພວງພັນ     ເປັນຄູ່ກັນມີສຸຂລົ້ນ
ອ້າຍທອງຄຳຄົນຮູ້     ໜູຮັກນາງນັ້ນເປັນຄູ່
ສອງຜົວເມັຽຍັງເຮັດຄຣູ     ມີຫຣັງບອກໃຫ້ຮູ້     ຈົດໝາຍກ້ອມຂ່າວຄາວ

ໃຈຍັງປວດຈ້າວໆ     ຖາມຂ່າວຄວາມຍິນດີ
ທ່ານເອີນມີເປັນແນວໃດ     ການຄ້າຂາຍໄປດີບໍ?
ຫຼືວ່າພໍຂາຍໄດ້     ປະກັນພັຍ ທຸກໆຢ່າງ
ເຖິງບໍ່ມີບໍ່ຮັ່ງ     ພໍໄດ້ກິນໄດ້ໃຊ້     ກໍໄຄແລ້ວເອົາແຕ່ບຸ່ນ

ຄິດສົງສັຍຈົນຫວ່າວຸ້ນ     ມານິດມີປ່ານແກວຕາຍ
ຄືສະຫາຍຄຳມີ     ຍັງຢູ່ດີຢູ່ບໍເພື່ອນ?
ຢ່າປ່ອຍລຳພອນເກົ້     ເມົາລະເມີເປັນບ້າປ່ວງ
ເປັນກະປອມລອດບ້ວງ     ຫຼົບເວັ້ນຍັກບໍ່ທັນ

**California** ແຖບນັ້ນ     ມີສາວຊ່າຫຼັກເຈັດ

*ເມັດນ້ຳຕານເມືອງສວັນ          ທຸກໆວັນເຄີຍຈາເວົ້າ*
*ນາງສົ່ງກອນມາເຂົ້າ          ເທິງ* ***Website*** *ໃຫ້ຄົນອ່ານ*
*ດຽວນີ້ຄູອາຈານ     ເພື່ອນນັກຮຽນທຸກທົ່ວໜ້າ     ຍັງລໍຖ້າອ່ານກອນ ເຈົ້າແລ້ວ*

*ສິ່ງຜິດກໍສະທ້ອນ          ການຂຽນອ່ານພາສາລາວ  ຈັ່ງໃດ*
*ພວກໝູ່ເຮົາຊາວຫຼັກເຈັດ          ຈົ່ນວ່າຕິດຜິລວງານນ້ອງ*
*ລອງບໍ່ເຫັນກອນເຈົ້າ          ພາກັນເຫງົາເວົ້າຈົ່ມ*
*ຢ້ານເຈົ້າໄປຕົກລົ່ມ     ຫຼົງຄາຣົມຜູ້ອື່ນຍ້ອງ     ເລີຍລືມພ້ອງພວກສະຫາຍ  ຫັ້ນແລ້ວ*

*ສ່ວນອີກຄົນໜຶ່ງໄດ້          ໃຈກວ້າງໃຫຽຄື ຂັນເງິນ*
*ລາວມົວເພີນແຕ່ນຳງານ          ລືມສົ່ງສາລມາຢາມຢີ້*
*ສົງມາຄືລືມໄດ້          ສັນຍາໃຈຊິຕິດຕໍ່  ກັນແລ້ວ*
*ປ່ອຍໃຫ້ລາງຄົນລໍ     ຄອຍຈໍນໍເຮັດພໍ້ອໍ້     ກໍເລີຍຫໍ້ເປີດອີເມລ໌*

*ຖາມຂັນເງິນຍັງບໍ່ແລ້ວ          ຍັງເກີແກ່ວຄວາມຄິດ*
*ສົມສນິດເປັນແນວໃດ          ສົງມິດໄປຫາຍຈ້ອຍ*
*ຫຼືສັງຂາລລົງຄ້ອຍ          ພອຍຄິດນຳແຕ່ລູກອ່ອນ*
*ຈົນອຶດຫຼັບອຶດນອນ     ໃຈອາວອນແຕ່ລູກແກ້ວ  ຈົນໃຈແປ້ວຢ້ານບໍ່ຮຽນ*

*ຄືຝົນຕົກບໍ່ເອື້ອນ          ນ້ຳໃຈເພື່ອນທາງ* ***Dallas***
*ຜັດແຕ່ມີອີເມລ໌          ບໍ່ຂ່າວຄາວຫາຍໜ້າ*
*ສຸມຸນທາ ຫຼື ໂຕ້ຍ          ຢ່າເສີຍເມີຍ  ຢຸດຢ່ອນ*
*ສວນວ່າເອື້ອຍຄຳພອນ  ຍັງອອນຊອນຍາມເພີ່ນເວົ້າ  ໃຫ້ເຮົາໄດ້ແຕ່ນັ່ງຟັງ*

*ສ່ວນອີເມລ໌ທີ່ຄາຄ້າງ          ສອງສາວຊື່ສາຍສມອນ*
*ໃຈອາທອນຍາມມາຢາມ          ສວ່າງງາມນ້ຳໃຈນັ້ນ*
*ສົມສວັນເປັນໃດເອື້ອຍ          ຢ່າທຳເສີຍ ໃຫ້ສົ່ງຂ່າວ*
*ພໍໃຫ້ຮູ້ເຣື່ອງລາວ     ສືບສາວກັນຕໍ່ໜ້າ     ຢ່າລາຮ້າງຫ່າງມາຍ*

*ສັງບໍ່ຄືສັ່ງໄວ້          ແພັສເຕົ໊ໃຫຽອີນທວາ*
*ມາບໍ່ເຫັນຈົດໝາຍ          ອ້າຍເຈົ້າໄປໃສແທ້*
*ບໍ່ມາແວມາຢ້ຽມ          ຄາຕຽມການແຕ່ນຳໂບສ  ບໍ່ນໍ*

ໂທດເດີ ບໍ່ໄດ້ຄ້ານ　　　　ແຕ່ເກງຢ້ານອ້າຍຫ່າງລາ

ແຖວມີນີໂຊຕ້າ　　　　ມາຖາມຂ່າວໄມຕຣີຈິດ
ມິດເສີຍໄປຄືນາງພິມ　　　　ຈັກຂື່ນຂົມອີ່ຫຣັງແທ້
ມີບັນຫາພາກັນແກ້　　　　ຈັດອີເມລ໌ນຳສົ່ງ
ສ່ວນທ່ານແກ້ວມະນີວົງ ນັ່ງຊຶງລົງຢູ່ແຕ່ບ້ານ ຍ້ອນຫຼານນ້ອຍເພິ່ນແອ່ວກອນ

ຖາມໄຖ່ໃຫ້ຄົບຖ້ວນ　　　　ທາອ້າຍໃຫຣ່ໃຈດີ
ແຖວແຖບ **New Jersey**　　　　ກໍຫາກມີອ້າຍໄວເຝົ້າ
ປ້າຈັນເພັງລາວພາເວົ້າ　　　　ອີ່ລຸງໄວເບິ່ງລາວຮ່ວນ
ຊວນໄປຢາມພວກພ້ອງ　　　　"ໄປເລີຍນ້ອງອ້າຍຊິຄອຍ" ວ່າຊ້ານ

ເອື້ອຍຈັນສົດກໍມິດຈ້ອຍ　　　　ຫຼືບໍ່ອ່ານຮອດຈົດຫມາຍ ຊັ້ນບໍ?
ຂ້ອຍຂຽນໄປແມ່ນໃຜຮັບ　　　　ໃຫ້ຕອບກັບພໍຮູ້
ຢ່າເປັນຄືເປັດຜູ້　　　　ຫນີໄປໄກແລ້ວລືມຖິ່ນ
ໄປບໍ່ເຫັນຮອດກິ່ນ　　ຄືຫົງບິນເຂົ້າເຝືອ ເຫຼືອໄວ້ແຕ່ໄງ່ຂວັຍ

ຂໍຊັກຊວນອ້າຍເອື້ອຍ　　　　ພ້ອມນ້ອງພີ່ທັງຫຼາຍ
ໃຫ້ຂະຍາຍຄວາມສັມພັນ　　　　ສົ່ງຂ່າວກັນຢ່າວາຍເວັ້ນ
ມີເວລາຂຽນມາເຫຼັ້ນ　　　　ຫຼືຂຽນກອນຊ້ອນຫຣ່ອຍ
ແຖມຜຍາແດ່ເລັກນ້ອຍ　　　　ຍາມເຊົາພ້ອຍພັກແຮງ ດີໃດ໋

ຢ່າເປັນຄືນແຫ້ງແລ້ງ　　　　ອ້າຍຊວນ ແຄ້ງ ເປັນແນວໃດ
ແມ່ນຢູ່ໄກແສນໄກ　　　　ໄດ້ຂ່າວຄາວກໍຄືໃກ້
ແມ່ນວ່າຍາມເຈັບໄຂ້　　　　ມີໄອໄຂ້ບໍ່ສວ່າງ
ມີໝູ່ໂທຖາມເປັນຫ່ວງ ຍັງສວ່າງເຊົາຮອດໄຂ້ ຫາຍຮ້ອນທຸກປະການ ຈິ່ງແລ້ວ...